ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

<u>ອົງການອະທິໄອຍະການ</u> /ເລກທີ 19 /ອທກ.

<u>ປະຊາຊົນແຫ່ງ ສປປລ.</u>

<u>ຄຳ ສັ່ງ ແນະ ນຳ</u>

ເຖິງ ບັນດາໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ເມືອງແລະ ອົງການສືບສວນ-ສອບສວນ ໃນທົ່ວປະເທດ.

<u>ເລື່ອງ</u>: ການກັກຕົວ, ການຈັບຕົວແລະການກັກຂັງພາງຕາມມາດຕາ 46,47, 48,49ແລະ50 ກົດໝາຍດຳເນີນຄະດີອາຍາ.

ເຫັນວ່າໄອຍະການປະຊາຊົນ, ພະນັກງານສອບສວນແລະເຈົ້າໜ້າທີ່ສືບສວນ-ສອບສວນຢູ່ບາງທ້ອງຖິ່ນບໍ່ທັນເຂົ້າໃຈດີ ຄວາມໝາຍຂອງການກັກຕົວ, ການຈັບຕົວແລະການກັກຂັງພາງຊຶ່ງກຳນົດໄວ້ຢູ່ໃນມາດຕາ 46,47ແລະ50 ກົດໝາຍດຳເນີນຄະດີອາຍາ. ພາຍຫຼັງໄດ້ຊອກເຫັນຜູ້ຖືກສົງໃສແລ້ວ ເມື່ອມີຄວາມຈຳເປັນໃນການສືບສວນ-ສອບສວນເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນມີສິດກັກຕົວຜູ້ຖືກສົງໃສໄວ້ພາຍໃນກຳນົດສາມວັນເພື່ອດຳເນີນການສືບສວນ-ສອບສວນ. ຖ້າເຫັນວ່າມີຄວາມຈຳເປັນຈະຕ້ອງກັກຂັງຜູ້ກະທຳຜິດຕໍ່ໄປອີກ, ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງຂໍຄຳສັ່ງກັກຂັງພາງນຳໄອຍະການ. ກ່ຽວກັບການຈັບຕົວໃນກໍລະນີເຊິ່ງໜ້າແລະຮີບດ່ວນຕາມມາດຕາ 48 ກົດໝາຍດຳເນີນຄະດີອາຍາບໍ່ຕ້ອງມີຄຳສັ່ງຂອງໄອຍະການຫຼືສານ, ສ່ວນໃນກໍລະນີບໍ່ເຊິ່ງໜ້າແລະບໍ່ຮີບດ່ວນຕ້ອງມີຄຳສັ່ງຈັບຕົວຂອງໄອຍະການຫຼືສານ ຖ້າຫາກຄະດີເຖິງສານແລ້ວ. ໃນກໍລະນີກັກຕົວ, ຈັບຕົວເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນມີສິດກັກຕົວຜູ້ກະທຳຜິດໄວ້ໄດ້ແຕ່ສາມວັນເທົ່ານັ້ນ ຖ້າຫາກເກີນກຳນົດສາມວັນແລ້ວເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງຂໍຄຳສັ່ງກັກຂັງພາງນຳໄອຍະການ ໝາຍຄວາມວ່າຕ້ອງປ່ຽນການກັກຕົວ, ການຈັບຕົວເປັນການກັກຂັງພາງ. ຄຳສັ່ງກັກຂັງພາງຂອງໄອຍະການມີກຳນົດແຕ່ສາມເດືອນ, ເກີນກຳນົດສາມເດືອນແລ້ວຖ້າຫາກເຫັນວ່າມີຄວາມຈຳເປັນໃນການກັກຂັງພາງຕໍ່ໄປອີກ, ໄອຍະການຕ້ອງອອກຄຳສັ່ງຕໍ່ການກັກຂັງພາງເທື່ອລະສາມເດືອນໂດຍອ້າງເຫດຜົນໃນການຕໍ່ການກັກຂັງພາງ ແຕ່ກຳນົດການກັກຂັງພາງທັງໝົດບໍ່ໃຫ້ເກີນໜຶ່ງປີ ຕາມມາດຕາ 50 ກົດໝາຍດຳເນີນຄະດີອາຍາ. ແຕ່ໃນພາກປະຕິບັດຕົວຈິງແລ້ວເຫັນວ່າໄອຍະການ, ພະນັກງານສອບສວນແລະເຈົ້າໜ້າທີ່ສືບສວນ-ສອບສວນຍັງລະເມີດກົດໝາຍດຳເນີນຄະດີຢູ່ຄືເຈົ້າໜ້າທີ່ສືບສວນ-ສອບສວນແລະພະນັກງານສອບສວນໄດ້ກັກຕົວຜູ້ຖືກສົງໃສໄວ້ເກີນກວ່າສາມວັນເປັນເວລາຫຼາຍເດືອນກໍມີ. ສ່ວນໄອຍະການກໍບໍ່ໄດ້ຕໍ່ຄຳສັ່ງກັກຂັງພາງພາຍຫຼັງໝົດກຳນົດສາມເດືອນແລ້ວ. ຕາມມາດຕາ 43 ກົດໝາຍອາຍາມີແຕ່ໃຫ້ຄິດໄລ່ການກັກຂັງພາງເຂົ້າໃນການປະຕິບັດໂທດຕັດອິດສະລະພາບໝາຍຄວາມວ່າການຄິດໄລ່ເຂົ້າໃນການປະຕິບັດໂທດນັບແຕ່ເວລາທີ່ໄອຍະການອອກຄຳສັ່ງກັກຂັງພາງເປັນຕົ້ນໄປ ສ່ວນເວລາກັກຕົວນັ້ນບໍ່ໄດ້ນັບເຂົ້າການປະຕິບັດໂທດຕັດອິດສະລະພາບ. ສະນັ້ນການກັກຕົວຜູ້ກະທຳຜິດເກີນກຳນົດເວລາກັກຕົວສາມວັນຈຶ່ງເຮັດ ;

.......2

ໜູກິ່ງຜູ້ທີ່ກະທຳຜິດ ໄດ້ຮັບຄວາມອັບປະໂຫຍດທົ່ວໄປ ເປັນການຈັບຄືວແລະກັກຂັງ ໂດຍບໍ່ຖືກຕ້ອງຕາມກົດໝາຍທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 71 ກົດໝາຍອາຍາ.

ດັ່ງນັ້ນ ຈຶ່ງໄດ້ແນະນຳໃຫ້ໄອຍະການໄດ້ສົມທົບກັບເຈົ້າໜ້າທີ່ສືບສວນ-ສອບສວນ ປະຕິບັດການກັກຕົວ, ຈັບຕົວ ແລະກັກຂັງພາງໃຫ້ຖືກຕ້ອງຕາມກົດໝາຍດຳເນີນຄະດີອາຍາ.

ວຽງຈັນ, ວັນທີ່ ... 1992

ໄອຍະການປະຊາຊົນ

ພັນ ວຸລາ